# San Diego Unified School District
## *Fact Sheet*

# ໂຄງການດູແລຮັກສາຂອງເຈົ້າໜ້າທີ່ຕຳຣວດສູນກາງສຶກສາແຊນດິເອໂກ

ຄວາມປອດພັຍ ແລະ ການຮັກສາຄວາມປອດພັຍຂອງໂຮງຮຽນເຂດສຶກສາແຊນດິເອໂກເປັນສິ່ງສຳຄັນທົ່ວເຂດສູນກາງສຶກສາ. ການບໍຣິການຂອງເຈົ້າໜ້າທີ່ຕຳຣວດແມ່ນໂຄງການປ້ອງກັນການກະຜິດກົດໝາຍໃນຊຸມຊົນ ເພື່ອຫລຸດຜ່ອນຄົນຂີ້ລັກເຂົ້າບ້ານ, ການຂີດຂຽນເປິະເປື້ອນ, ການທຳລາຍມ້າງເພ. ລັກປຸ້ນ ແລະ ລັກວາງເພີງຈູດເຜົາ, ເປັນໜ້າທີ່ *ໂຄງການຮັກສາໂຮງຮຽນ*ທຸກຢ່າງ. *ໂຄງການຮັກສາໂຮງຮຽນ*ນີ້ໄດ້ຊຸກຍູ້ໃຫ້ທຸກຄົນໃນໂຮງຮຽນ, ຜູ້ໃຫຍ່, ເດັກນ້ອຍ, ແລະ ນັກທຸລະກິດຜູ້ຮ່ວມວຽກຊ້ຳຊອມເບິ່ງ – ທຸກຢ່າງທີ່ຜິດປົກກະຕິ ຫລື ມີຄວາມສົງສັຍໃນລະຍະໂຮງຮຽນເປີດຮຽນ, ຫລັງຈາກໂມງຮຽນ ຫລື ຊ່ວງລະຍະປິດໂຮງຮຽນ ຂອງແຕ່ລະໂຮງຮຽນ.

ສູນກາງສຶກສາຈ່າຍຄ່າການຖືກທຳລາຍປະຈຳປີ ຫລາຍກວ່າ ລ້ານດອລລາ, ຊຶ່ງໂຄງການອາສາສມັກ*ຮັກສາດູແລໂຮງຮຽນ* ສາມາດຊ່ອຍຫລຸດລາຍຈ່າຍເຫລົ່ານີ້ລົງ. ຜ່ານການເອົາໃຈໃສ່ພິເສດຈາກອົງການຊ່ວຍເຫລືອຕ່າງໆຂອງໂຮງຮຽນນີ້, ເອົາເຈົ້າສາມາດເຮັດໃຫ້ໂຮງຮຽນມີຄວາມປອດພັຍ ແລະ ສາມາດຊ່ອຍປ້ອງກັນພວກຜູ້ຮ້າຍໄດ້.

ເລີ້ມເມື່ອເດືອນກັນຍາ 2004, ການບໍຣິການຂອງຕຳຣວດ ໄດ້ລິເລີ້ມ ໂຄງການ*ຮັກສາດູແລໂຮງຮຽນ* ຢູ່ໂຮງຮຽນມັທຍົມແຊຣາ. ເອົາເຈົ້າໄດ້ວາງແຜນພົວພັນກັບບ້ານໃກ້ຄຽງໂຮງຮຽນເພື່ອໃຫ້ເປັນຫູເປັນຕາຊ່ອຍປ້ອງກັນຮັກສາໂຮງຮຽນຂອງພວກເຮົາ. ໂຄງການທົດລອງນີ້ໄດ້ລິເລີ້ມປະຕິບັດງານໃນເຂດຊຸມຊົນຂອງໂຮງຮຽນມັທຍົມແຊຣາ.

ໃນລະດູໃບໄມ້ລົ່ນປີນັ້ນ, ເຈົ້າໜ້າທີ່ຕຳຣວດສູນກາງສຶກສາໄດ້ເລາະຊັກຊວນບ້ານໃກ້ຄຽງຂອງໂຮງຮຽນແຕ່ລະເຮືອນໆໄປ ເພື່ອໃຫ້ເຂົ້າຮ່ວມເປັນອາສາສມັກ ແລະ ອະທິບາຍສູ່ເອົາເຈົ້າກ່ຽວກັບໂຄງການໃຫມ່ນີ້. ໄດ້ຮຽກຮ້ອງໃຫ້ຜູ້ອາສັຍຢູ່ໃນເຂດນີ້ສັບປ່ຽນເວລາກັນທົດນ້ຳຫຍ້າ, ລ້າງຣົຖ, ແລະ ເຮັດງານຕ່າງໆ, ເພື່ອໃຫ້ເອົາເຈົ້າໄດ້ດູແລຮັກສາຜູ້ຮ້າຍຊ່ອຍກັນໃນລະຍະເວລາໂຮງຮຽນເຂົ້າ ຫລື ຫລັງຈາກໂຮງຮຽນເລີກ.

ລັກສະນະການກະທຳທີ່ໜ້າສົງໃສຕ່າງໆນັ້ນມີ ການຖິ້ມຂີ້ເຫຍື່ອ, ສຽງທັບແຫວ່ນປ້ອງຢ້ຽມ, ສຽງຮ້ອງ/ການຕີກັນ, ຄົນແລ່ນໜີອອກຈາກໂຮງຮຽນ, ການຂີດຂຽນເປິະເປື້ອນ, ໂອ່ນແຂວນໃສ່ບ້ວງບານບາສເກັດ, ຈົກທຳລາຍປ້າຍໂຮງຮຽນ, ທຳລາຍສວນຫຍ້າໂຮງຮຽນ ແລະ ອີກອື່ນໆຫລາຍຢ່າງ.

## ຂໍ້ສລູບ

- ❖ ຕົກລົງຈະຊ່ອຍປ້ອງກັນເຂດໃກ້ຄຽງໂຮງຮຽນ
- ❖ ຈະເປັນຫູເປັນຕາໃຫ້ໂຮງຮຽນຂອງທ່ານ
- ❖ ສູນກາງສຶກສາຈ່າຍຄ່າໂຮງຮຽນທີ່ຖືກທຳລາຍປະຈຳປີ ຫລາຍກວ່າ $1 ລ້ານດອລ.
- ❖ ການປະພຶດທີ່ຄວນເອົາໃຈໃສ່ນັ້ນຄື:
    - ❖ ການຖິ້ມຂີ້ເຫຍື່ອ
    - ❖ ສຽງຜິດປົກກະຕິເຊັ່ນ ສຽງທັບແກ້ວແຫວ່ນ, ສຽງຕີກັນ, ສຽງຄົນຮ້ອງ
    - ❖ ເຫັນຄົນແລ່ນອອກຈາກໂຮງຮຽນ, ໂດຍສະເພາະເຫັນພວກເອົາຖືສິ່ງຂອງຕ່າງໆ.
    - ❖ ເຫັນພວກເອົາຂີດຂຽນເປິະເປື້ອນ
    - ❖ ຫ້ອຍແຂວນຢູ່ບ້ວງບາສເກັດ
    - ❖ ຈົກ ທຳລາຍປ້າຍຂອງໂຮງຮຽນ
    - ❖ ທຳລາຍສວນດອກໄມ້ໂຮງຮຽນ
- ❖ ໂທຣະສັບລາຍງານທຸກງຄັ້ງ ຈະຖືເປັນຄວາມລັບ
- ❖ ໂທຣະສັບລາຍງານທຸກງຢ່າງທີ່ຜິດສັງເກດທີ່ເລກ (619) 291 – 7678.

ຜູ້ອາສັຍຢູ່ບ້ານໃກ້ຄຽງທີ່ລາຍງານສິ່ງສົງໃສຜິດປົກກະຕິນັ້ນ ບໍ່ ຈຳເປັນຕ້ອງບອກຊື່. ການໂທຣະສັບທຸກຢ່າງນັ້ນຖືເປັນຄວາມຫລັບ ແລະ ບໍ່ບອກໃຫ້ໃຜຮູ້ກ່ຽວກັບຊື່ ຫລື ຫລັກຖານຂອງຜູ້ໂທຣນັ້ນ.

ເພື່ອລາຍງານພຶດຕິການຜິດສັງເກດຕ່າງໆນັ້ນ, ໂທຣະສັບໄປຫາເຈົ້າໜ້າທີ່ຕຳຣວດໂຮງຮຽນ (619) 291 – 7678

ລາຍລະອຽດຕິດຕໍ່ຫາ: Police Services Department: (619) 725 – 7000 Administration, (619) 291 – 7678 Dispatch
www.sandi.net

Becoming America's Best

*XK., 10/25/06 Factsheet, San Diego City School Police School Watch Program /Lao Version*